## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 4 ກຸມພາ 2024 (02-04-2024)

---

## ຄວາມເຊື່ອທີ່ຄາດຫວັງ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອຮັກສາຄວາມໄວ້ວາງໃຈໃນພຣະເຈົ້າເພື່ອເຮັດສິ່ງທີ່ບໍ່ມີໃຜສາມາດເຮັດໄດ້.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ແມ່ນຫຍັງເຮັດໃຫ້ເລື່ອງລາວນິຍາຍເປັນສິ່ງທີ່ຍິ່ງໃຫຍ່? ຂ້າພະເຈົ້າຄິດວ່າພວກເຮົາທັງໝົດຄົງຈະເຫັນດີວ່ານາທີ-ສຸດທ້າຍໃນການກູ້ພັຍ ແລະສິ່ງທີ່ບໍ່ຄາດຫວັງເຮັດໃຫ້ເປັນການປ່ຽນທິດທາງຊີວິດຍິ່ງໃຫຍ່ທີ່ສຸດ. ພວກເຮົາມັກທີ່ຈະອ່ານເລື່ອງລາວຂອງວິຣະຊົນທີ່ມີຂໍ້ບົກພ່ອງ ຊຶ່ງໄດ້ໂຜ່ຕົວຢ່າງໄວວາເຂົ້າມາກອບກູ້ໂລກແລະປາບບັນດາສັດຕູ. ບາງສິ່ງບາງຢ່າງໃນຈິດໃຈຂອງພວກເຮົາປາຖນາຫາເລື່ອງລາວເຫຼົ່ານັ້ນ. ເມື່ອພວກເຮົາອ່ານເລື່ອງຂ່າວປະເສີດ, ພວກເຮົາພົບເຫັນເລື່ອງຈິງຂອງວິຣະຊົນທີ່ສົມບູນແບບຜູ້ທີ່ໄປໄກເກີນກວ່າເລື່ອງລາວຂອງນິຍາຍ. ພວກເຮົາໄດ້ອ່ານຫຼາຍໆເລື່ອງທີ່ເບິ່ງຄືວ່າບໍ່ມີການຊ່ວຍເຫຼືອຊີວິດທີ່ເປັນໄດ້. **ແຕ່ສຳລັບພຣະເຢຊູ, ທຸກສິ່ງທຸກຢ່າງເປັນໄປໄດ້.** ພຣະເຢຊູບໍ່ໄດ້ຊົງຖືກເຊື່ອມຕໍ່ໂດຍທັສນະສູດ(formular)ຂອງພວກເຮົາກ່ຽວກັບວິທີການດຳເນີນຊີວິດໄປ. ເວລາຂອງພຣະອົງແມ່ນສົມບູນແບບ, ເຖິງແມ່ນວ່າມັນເບິ່ງຄືວ່າພຣະອົງຊົງກ້າວເຂົ້າມາຊ້າເກີນໄປກໍ່ຕາມ. ນີ້ແມ່ນເລື່ອງລາວທີ່ເສີມສ້າງຄວາມເຊື່ອຂອງພວກເຮົາໃນລະຫວ່າງຣະດູການທີ່ຫຍຸ້ງຍາກ. ມັນເຮັດໃຫ້ພວກເຮົາມີຄວາມຫວັງ-ເຖິງແມ່ນວ່າໃນຄືນທີ່ມືດມົວທີ່ສຸດ-ວ່າເລື່ອງລາວຍັງບໍ່ທັນຈົບ. ພຣະເຢຊູຍັງຊົງເລົ່າເລື່ອງບໍ່ທັນຈົບ (ຮວມເຖິງເລື່ອງລາວຂອງທ່ານດ້ວຍ). ໃນຄວາມເປັນຈິງແລ້ວ, ພຣະອົງພຽງແຕ່ຊົງອຸ່ນເຄື່ອງວົງດົນຕຣີແຫ່ງໄຊຊະນະເທົ່ານັ້ນ! ພາກບົດຮຽນອາທິດນີ້ເນັ້ນໃສ່ຕົວຢ່າງທີ່ສົມບູນແບບຂອງ**ຄວາມເຊື່ອທີ່ຄາດຫວັງ.** ໃນຂນະທີ່ພວກເຮົາເຫັນພຽງແຕ່ຊ່ວງສຸດທ້າຍ, ພຣະເຢຊູຊົງປ່ຽນແປງຄວາມເຊື່ອທີ່ຄາດຫວັງນັ້ນໃຫ້ດຳເນີນຕໍ່ໄປ.

*ເມື່ອໃດທີ່ທ່ານປລາດໃຈກັບບາງສິ່ງບາງຢ່າງທີ່ເກີນຄວາມຄາດຫວັງຂອງທ່ານ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ລູກາ 8:41-42

*41 ແລະເບິ່ງແມ, ມີຊາຍຄົນນຶ່ງຊື່ຢາອີໂຣ ເປັນນາຍໂຮງທັມມະເທສນາມາຂາບລົງທີ່ພຣະບາດຂອງພຣະເຢຊູ ອ້ອນວອນຂໍໃຫ້ພຣະອົງ*
*ສະເດັດເຂົ້າໄປໃນເຮືອນຂອງຕົນ. 42 ເພາະວ່າເພິ່ນມີລູກສາວຄົນດຽວອາຍຸປະມານສິບສອງປີ ລູກນັ້ນກຳລັງຈະຕາຍໄປ.*

ເບິ່ງຄືວ່າພຣະເຢຊູຊົງຖືກສະເທືອນພຣະທັຍໂດຍຄວາມສິ້ນຫວັງຂອງເຮົາສເມີ. ຄວາມສິ້ນຫວັງເຮັດໃຫ້ທຸກສິ່ງທຸກຢ່າງຕົກໄປເປັນເບື້ອງຫຼັງໃນຂນະທີ່ພວກເຮົາປະເຊີນກັບຄວາມຢ້ານກົວທີ່ຮ້າຍແຮງທີ່ສຸດແລະຄວາມຕ້ອງການອັນຍິ່ງໃຫຍ່ທີ່ສຸດຂອງພວກເຮົາ. ຢາອີໂຣຜູ້ນຳໃນໂຮງທັມມະເທສນາໄດ້ຮຽນຮູ້ບົດຮຽນນີ້ໄດ້ດີ. ກ່ອນທີ່ຄວາມໂສກເສົ້າອັນຍິ່ງໃຫຍ່ຂອງລາວຈະຄອບງຳລາວ, ຢາອີໂຣຄົງຈະໄດ້ມອງເບິ່ງພຣະເຢຊູວ່າເປັນຄົນໝິ່ນປມາດແລະເປັນຄົນນອກຮີດຄອງ. ແຕ່ຄວາມສິ້ນຫວັງຂອງລາວໄດ້ດຶງລາວໄປຫາພຣະເຢຊູ. ໃນຖານະເປັນຜູ້ນຳຂອງໂຮງທັມມະເທສນາ, ລາວຈະຈັດລຳດັບວິທີການແລະກຳນົດວ່າ ໃຜສາມາດອ່ານພຣະຄັມພີແລະໃຫ້ຄຳເທສນາໄດ້. ລາວໄດ້ຖືກເລືອກໂດຍເພື່ອນຮອບຂ້າງ, ດັ່ງນັ້ນ, ພວກເຮົາຈຶ່ງສລຸບໄດ້ວ່າລາວໄດ້ຮັບຄວາມນິຍົມຊົມຊອບ. ແຕ່ຜົນສຳເລັດທັງໝົດເຫຼົ່ານີ້ແລະຄວາມໂປດປານຂອງເພື່ອນຝູງໄດ້ຈືດຈາງຫາຍໄປເປັນເບື້ອງຫຼັງ.

ເມື່ອພວກເຮົາປະສົບກັບຄວາມເສັຽຫາຍອັນຮ້າຍແຮງ, ພວກເຮົາປັບຄຸນຄ່າແລະການສັນນິຖານຄືນໃໝ່. **ມັນປ່ຽນແປງພວກເຮົາ!** ຂ້າພະເຈົ້າແນ່ໃຈວ່າທ່ານເຄີຍໄດ້ຍິນຄົນທີ່ປະສົບຄວາມສຳເລັດຍິ່ງໃຫຍ່ແລະຮັ່ງມີທີ່ເວົ້າວ່າ: ພວກເຂົາເຈົ້າຈະເອົາມັນຄືນໃຫ້ທັງໝົດ**ຖ້າ**

**ຫາກວ່າ**ພວກເພິ່ນສາມາດຊ່ວຍໃຫ້ລູກຊາຍພົ້ນຈາກໂຣກມະເລັງເມັດເລືອດຂາວ(leukemia), **ຖ້າຫາກວ່າ**ພວກເພິ່ນເຫັນລູກສາວເຂົ້າຮັບການພະຍາບານຮັກສາ, ຫລື**ຖ້າຫາກວ່າ**ພວກເພິ່ນສ້າງຊີວິດແຕ່ງງານທີ່ລົ້ມເຫຼວຂຶ້ນມາໃຫມ່. ທ່ານ ຊີ ແອສ ລູວີສ (C. S. Lewis) ຜູ້ຂຽນປຶ້ມ *"ບັນຫາແຫ່ງຄວາມເຈັບປວດ"* (The Problem of Pain) ໄດ້ເວົ້າວ່າ: "ຄວາມເຈັບປວດຮຽກຮ້ອງໃຫ້ມີການດູແລ. ພຣະເຈົ້າຊົງກ່າວໃນຈິດສຳນຶກຂອງພວກເຮົາ, ໃນຕອນເຮົາມີຄວາມສຸກສຽງຂອງພຣະເຈົ້າແຜ່ວເບົາເໝືອນສຽງກະຊິບ, ແຕ່ຕອນເຈັບປວດມັນເໝືອນສຽງແຜດຮ້ອງອັນດັງ: <u>ມັນແມ່ນໂທລະໂຂ່ງຂອງພຣະອົງເພື່ອປຸກ**ໂລກທີ່ຫູໜວກ.**</u>"

ການເຫັນລູກສາວຂອງລາວພວມຈະຕາຍກໍເຮັດໃຫ້ຢາອີໂຣພຸ່ງເຂົ້າສູ່ວົງໂຄຈອນທີ່ແຕກຕ່າງກັນ. ສາສນາສາດ(ຄວາມເຊື່ອ)ຂອງລາວເບິ່ງຄືວ່າບໍ່ຊັດເຈນໃນຂະນະທີ່ລາວພຍາຍາມຈັດວາງມັນດ້ວຍປະສົບການຊີວິດ. ລາວໄດ້ເຮັດໃນສິ່ງທີ່ບັນດາພວກພໍ່ທີ່ດີທັງຫຼາຍຈະເຮັດ. ລາວໄດ້ປະຖິ້ມຄວາມອະຄະຕິ, ກຽດສັກສີ(ຄວາມພຶງພໍໃຈໃນຕົນເອງ), ແລະກົດເກນຂອງລາວເພື່ອຄວາມຫວັງວ່າ: <u>ພຣະເຢຊູຊົງເປັນຜູ້ທີ່ພຣະອົງໄດ້ຊົງກ່າວວ່າພຣະອົງເປັນ</u> (Jesus is Who He said He is). ພວກເຮົາໄດ້ຮູ້ວ່າພຣະເຢຊູຜູ້ນີ້ສາມາດເຮັດຂັ້ນຕອນນີ້ໄດ້. ໃນທຸກໆການທ້າທາຍທີ່ພວກເຮົາໄດ້ປະສົບການກັບບັນດາລູກຂອງພວກເຮົາ, ພວກເຮົາໄດ້ຮັບຮູ້ວ່າພຣະເຢຊູຊົງລົງທຶນໃນພວກເຂົາເຈົ້າ(ບັນດາລູກ)ຄືກັນກັບພວກເຮົາ. <u>ແທ້ຈິງແລ້ວ</u>, <u>ພຣະອົງຊົງໄດ້ລົງທຶນຫຼາຍກວ່າພວກເຮົາເສັຽອີກ</u>. ພວກພໍ່ແມ່ທັງຫຼາຍບໍ່ສາມາດທີ່ຈະຮັກລູກຂອງພວກເພິ່ນຫຼາຍກວ່າພຣະເຢຊູທີ່ຊົງຮັກພວກເຂົາເຈົ້າ. **ຖ້າຫາກວ່າພວກເຮົາດຳເນີນຊີວິດໂດຍຄາດຫວັງສແວງຫາພຣະຫັດ(ມື)ຂອງພຣະເຢຊູ, ພຣະອົງຈະບໍ່ຊົງປະຕິເສດພວກເຮົາ ຫຼື ຊົງປະຖິ້ມພວກເຮົາ!**

*ສິ່ງໃດອາດຈະເກີດກັບພວກເຮົາຈາກການນຳຄວາມຕ້ອງການຂອງພວກເຮົາໄປຫາພຣະເຢຊູ?*

## 2. <u>ລູກາ 8:49-53</u>

*49 ໃນຂະນະທີ່ພຣະອົງຊົງກ່າວຢູ່ນັ້ນ ມີຄົນນຶ່ງມາແຕ່ເຮືອນຂອງນາຍໂຮງທັມບອກວ່າ, "ລູກຂອງນາຍຕາຍແລ້ວ ຂໍຢ່າໄດ້ຣົບກວນອາ-*
*ຈານຕໍ່ໄປ." 50 ຝ່າຍພຣະເຢຊູ ເມື່ອໄດ້ຍິນກໍຊົງກ່າວແກ່ນາຍນັ້ນວ່າ, "ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ ແລະລູກຈະໄດ້ລອດພົ້ນ."*
*51 ເມື່ອສະເດັດເຖິງເຮືອນແລ້ວ ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ຜູ້ໃດເຂົ້າໄປນຳ ເວັ້ນແຕ່ເປໂຕ, ໂຢຮັນ, ຢາໂກໂບ, ແລະພໍ່ແມ່ຂອງ*
*ເດັກນ້ອຍນັ້ນ. 52 ຄົນທັງຫລາຍກໍຕີອົກຮ້ອງໄຫ້ຮ່ຳໄຮເພາະເດັກນ້ອຍນັ້ນ ແຕ່ພຣະອົງຊົງບອກວ່າ, "ຢ່າຮ້ອງໄຫ້ເທາະ ເດັກນ້ອຍນັ້ນບໍ່*
*ຕາຍດອກ ແຕ່ຫລັບຢູ່ເທົ່ານັ້ນ." 53 ແລ້ວເຂົາພາກັນຫົວຂວັນພຣະອົງ ເພາະເຂົາຮູ້ວ່າເດັກນ້ອຍນັ້ນຕາຍແລ້ວ.*

ໃນທ່າມກາງພາຣະກິຈເພື່ອຈະຊ່ວຍເດັກນ້ອຍຍິງຄົນນຶ່ງ, ຜູ້ຍິງຄົນນຶ່ງທີ່ຖືກເພື່ອນຝູງປະຕິເສດກໍໄດ້ຍື່ນມືໄປແຕະຕ້ອງພຣະເຢຊູ. ທັງໝົດນີ້ໄດ້ເກີດຂຶ້ນໃນຊ່ວງເວລາດຽວກັນ. (ເບິ່ງຂໍ້ 43-48). ແຕ່ວ່າສິ່ງທີ່ຍິ່ງໃຫຍ່ກ່ຽວກັບອົງພຣະເຢຊູແມ່ນວ່າ ບ່າຂອງພຣະອົງຍັງກວ້າງພໍ. ພວກເຮົາຈື່ຈຳຄຳກ່າວຂອງພຣະອົງຕໍ່ບັນດາຜູ້ຄົນທີ່ອິດເມື່ອຍຕລອດຊ່ວງພຣະຣາຊພາຣະກິຈໃນໂລກນີ້ຂອງພຣະອົງດັ່ງນີ້:

- **ຈົ່ງເອົາແອກຂອງເຮົາແບກໄວ້. ມັນງ່າຍ. ພາລະຂອງເຮົາກໍ່ເບົາ.**
- **ຈົ່ງພັກຜ່ອນໃນເຮົາ.**
- **ຈົ່ງມາຫາເຮົາ.**
- **ຈົ່ງມີຄວາມເຊື່ອ.**

ຂ້າພະເຈົ້ານຶກພາບ(ຈິນຕະນາການ)ວ່າພຣະເຢຊູຊົງຕ້ອງກ່າວຄຳເຫຼົ່ານີ້ ຊ້ຳແລ້ວຊ້ຳອີກ, ເພາະວ່າພວກເຮົາມີແນວໂນ້ມທີ່ຈະຍຶດຄອງໂລກ <u>ແລະມີພຽງພຣະອົງເທົ່ານັ້ນທີ່ຊົງສາມາດເຮັດໄດ້</u>. ຜູ້ຍິງທີ່ໝົດຫວັງ, ເຈັບປ່ວຍ, ລົ້ມເຫລວຄົນນີ້ໄດ້ຮຽນຮູ້ເຣື່ອງນີ້ໃນຂະນະທີ່ນາງຕໍ່ສູ້ກັບຝູງຊົນເພື່ອແຕະຕ້ອງເສື້ອຄຸມຂອງພຣະເຢຊູ. ທັນທີທັນໃດທີ່ນາງແຕະຕ້ອງເສື້ອຄຸມ, ພຣະອົງຊົງຮູ້. ພຣະເຢຊູຊົງເອົາພຣະທັຍທັງໝົດຂອງພຣະອົງໃສ່ທີ່ນາງ. ໃນກໍລະນີນີ້, ພວກເຮົາສາມາດເຫັນດີໃນຫຼາຍໆຢ່າງກ່ຽວກັບພຣະເຢຊູ: <u>ພຣະອົງບໍ່ຊົງເຄີຍຊ້າເກີນໄປ, ພຣະອົງບໍ່ຊົງເຄີຍຫຍຸ້ງເກີນໄປ</u>, ແລະ<u>ພຣະອົງບໍ່ຊົງເຄີຍມີພາລະໜັກເກີນໄປ</u>ທີ່ຈະຊົງກ້າວເຂົ້າໄປໃນຄວາມເຈັບປວດຂອງຄວາມສິ້ນຫວັງຂອງພວກເຮົາ. ບາງຄັ້ງ, ພຣະອົງຕ້ອງຊົງເຮັດໃຫ້ພວກເຮົາຕົກຢູ່ໃນຄວາມສິ້ນຫວັງ ເພື່ອໃຫ້ພວກເຮົາສແວງຫາພຣະອົງດ້ວຍຄວາມພາກພຽນພຍາຍາມ. **ນັ້ນແມ່ນຈຸດທັງໝົດຂອງຊີວິດນີ້.** ແລະເຖິງຢ່າງໃດກໍ່ຕາມ, ພວກເຮົາມັກຈະບໍລິໂພກຫຼາຍເກີນໄປກັບຝູງ

ຊິນ, ເງິນສົດ, ແລະບັນຍາກາດ ຈຶ່ງບໍ່ສາມາດຢຸດແລະສຸມໃສ່ກະສັດຜູ້ຍິ່ງໃຫຍ່ແລະໂດດເດັ່ນຂອງພວກເຮົາ. ເຫດການນີ້ໄດ້ເກີດຂຶ້ນເປັນຈຸດຍ່ອຍຂອງສິ່ງທີ່ໄດ້ເກີດຂຶ້ນໃນຊີວິດຂອງຢາອີໂຣ. ມັນເປັນການເຕືອນວ່າພຣະເຢຊູສາມາດເຮັດໄດ້ຫຼາຍກວ່າສອງສິ່ງໃນເວລາດຽວກັນ. ຫຼາຍກວ່ານັ້ນ. ແຕ່ເມື່ອມາເຖິງກົດແຫ່ງຈັກກະວານ, ພຣະເຢຊູຊົງຝ່າຝືນກົດນັ້ນຢ່າງຕໍ່ເນື່ອງພຣະອົງຊົງມີສິດທິພິເສດຂອງພຣະເຈົ້າ. ຈົ່ງມາເບິ່ງພາບອັນວຸ້ນວາຍນີ້: ບັນດາຜູ້ໂສກເສົ້າທີ່ເປັນມືອາຊີບໄດ້ຍ່າງຕາມເສັ້ນທາງໄປຫາເຮືອນຂອງຢາອີໂຣ, ຜູ້ນໍາທີ່ບໍ່ນັບຖືໂຮງທັມມະເທສນາທີໄດ້ຮັບຂ່າວວ່າຊ້າເກີນໄປແລ້ວ: "ລູກສາວຂອງເຈົ້າໄດ້ຕາຍໄປແລ້ວ." ພຣະເຢຊູບໍ່ໄດ້ຊົງລໍຖ້າຄໍາຕອບຈາກຢາອີໂຣ. ພຣະອົງຊົງພຽງແຕ່ໄດ້ກ່າວວ່າ: "<u>ບໍ່ຕ້ອງຢ້ານ. ພຽງແຕ່ເຊື່ອເທົ່ານັ້ນ.</u>" ພຣະເຢຊູໄດ້ຊົງສັ່ງບັນດາຜູ້ທີ່ໂສກເສົ້າວ່າ: "ຈົ່ງເຊົາການຮ້ອງໄຫ້ເສັຽເຖີດ, ເພາະນາງຍັງບໍ່ທັນຕາຍເທື່ອ ພຽງແຕ່ນອນຫຼັບໄປເທົ່ານັ້ນ." ບັນດາຜູ້ທີ່ໂສກເສົ້າທີ່ໜ້າເສົ້າໃຈນີ້ໄດ້ຕອບໂຕ້ໂດຍການຫົວເຍາະເຍີ້ຍ. <u>ພວກເຂົາເຈົ້າບໍ່ໄດ້ມີຄວາມຄິດໃນພຣະອໍານາດຣິດເດດຂອງອົງພຣະເຢຊູ</u>. ໃນຈິດໃຈຂອງພວກເຂົາເຈົ້າ, ພວກເຂົາມີຊີວິດຢູ່ດົນນານພໍທີ່ຈະຮູ້ຈັກ<u>ກົດເກນ</u>: **ຄົນຕາຍ. ພວກເຮົາໄວ້ທຸກ. ຈົບເຣື່ອງ. ສິ້ນສຸດ.** ພວກເຂົາເຈົ້າບໍ່ສາມາດຈິນຕະນາການເຖິງພຣະມະຫາອໍານາດຂອງສັນຍາລັກອັນສັກສິດນີ້: ***ພຣະເຢຊູຊາວນາຊາເຣັດ.***

ພວກເຮົາທັງໝົດໄດ້ລົ້ມລຸກຄຸກຄານກັບຄວາມຕາຍ. ຖ້າມັນບໍ່ແມ່ນການຕາຍຂອງລູກ, ມັນອາດເປັນການຕາຍຂອງຄວາມຝັນ, ຂອງຄວາມສັມພັນ, ຫຼືຂອງຈຸດໝາຍປາຍທາງ. ເມື່ອພຣະເຢຊູໄດ້ຊົງສະເດັດເຂົ້າໄປໃກ້ເຮືອນຂອງຢາອີໂຣ, ບັນດາຜູ້ທີ່ໂສກເສົ້າໄດ້ຫົວຂວັນ. ຖ້ອຍຄໍາທີ່ທ່ານລູກາໃຊ້ສໍາລັບການ <u>*ຫົວເລາະ*</u> ໝາຍເຖິງ <u>*ສຽງຫົວເລາະເຍາະເຍີ້ຍ*</u>. ມັນແມ່ນການຫົວເລາະປະເພດທີ່ສື່ສານວ່າ: "**ເຈົ້າເສັຽສະຕິໄປແລ້ວຊັ້ນບໍ່?**" ມັນເປັນເວລາທີ່ສົມບູນແບບທີ່ພຣະເຢຊູຈະຊົງໄດ້ປາກົດພຣະກາຍ(ປາກົດຕົວ). <u>**ພຣະອົງຊົງມັກສະຖານະການທີ່ເປັນໄປບໍ່ໄດ້**</u>. <u>**ນັ້ນແມ່ນຄວາມພິເສດຂອງພຣະອົງ**</u>.

ເມື່ອໃດທີ່ທ່ານໄດ້ເຫັນຫຼືໄດ້ຍິນເຣື່ອງພຣະເຈົ້າຊົງພວມເຮັດວຽກຢູ່ໃນສະຖານະການທີ່ເບິ່ງຄືວ່າສິ້ນຫວັງ?

## 3. <u>ລູກາ 8:54-56</u>

*54 ຝ່າຍພຣະອົງຊົງຈັບມືເດັກນ້ອຍ ແລ້ວຊົງຮ້ອງວ່າ, "ລູກເອີຍ, ຈົ່ງລຸກຂຶ້ນແມ!". 55 ແລະຈິດວິນຍານກໍກັບເຂົ້າໃນຕົວເດັກນ້ອຍນັ້ນ ນາງໄດ້ລຸກຂຶ້ນທັນທີ ພຣະອົງຈຶ່ງຊົງສັ່ງໃຫ້ເອົາອາຫານມາໃຫ້ນາງກິນ. 56 ຝ່າຍພໍ່ແມ່ຂອງເດັກນ້ອຍນັ້ນກໍງຶດອັສຈັນໃຈຫລາຍ ແຕ່ພຣະອົງຊົງຫ້າມເຂົາບໍ່ໃຫ້ບອກຜູ້ໃດຮູ້ເຫດການຊຶ່ງເປັນມານັ້ນ.*

ພຣະເຢຊູໄດ້ຊົງຮ້ອງຂຶ້ນເປັນພາສາອາຣາເມັກ(Aramaic)ວ່າ: "ຕາລີທາ ກູມີ" *"Talitha cumi"* ສອງຄໍາເວົ້າແປວ່າ: "ລູກແກະນ້ອຍຈົ່ງລຸກຂຶ້ນ!" *"Little lamb arises!"* ເສດຖະກິຈຂອງຄໍາສັບຕ່າງໆສະທ້ອນໃຫ້ເຫັນເຖິງພຣະອໍານາດແລະພຣະສິດທິອໍານາດຂອງພຣະຄຣິດ. <u>ພຣະອົງຊົງເວົ້າ ແລະ ມັນກໍ່ເກີດຂຶ້ນ:</u>

- ສັນຕິພາບ ຈົ່ງຕັ້ງຢູ່.
- ຍົກເອົາຕຽງນອນຂອງເຈົ້າແລະຍ່າງໄປເຖີດ.
- ບາບຂອງທ່ານທັງໝົດໄດ້ຮັບການໃຫ້ອະພັຍແລ້ວ.
- ລູກແກະນ້ອຍ ຈົ່ງລຸກຂຶ້ນ!

<u>**ພຣະສິດທິອໍານາດຂອງພຣະອົງຊົງຂັບໄລ່ຜູ້ສົງສັຍແລະຊົງນໍາລົມຫາຍໃຈມາສູ່ເດັກນ້ອຍທີ່ໄຮ້ຊີວິດຊີວາ.**</u>

*ທ່ານເຫັນຫຼັກຖານຂອງພຣະເຈົ້າເຮັດວຽກຢູ່ໃສໃນໂລກທຸກມື້ນີ້?*

ມີຄວາມລຶກລັບຫລາຍໃນເຣື່ອງນີ້. ຫຼັງຈາກການອັສຈັນແລ້ວ, ພຣະເຢຊູໄດ້ຊົງບອກຄອບຄົວໃຫ້ມິດງຽບໃນເຣື່ອງທີ່ເກີດຂຶ້ນ. ພຣະເຢຊູແມ່ນແຕກຕ່າງກັນກັບອັນທີ່ເອີ້ນວ່າ<u>ຜູ້ປິ່ນປົວຄວາມເຊື່ອ</u>ໃນສມັຍຂອງພວກເຮົາ. ພວກເຂົາເຈົ້າຢາກເຮັດການອັສຈັນຂອງຕົນກ່ອນທີ່ຈະຕົບມືໃຫ້ກັບຝູງຊົນ. ພຣະເຢຊູຊົງຮູ້ວ່າ<u>ຄວາມເຊື່ອທີ່ເກີດມາຈາກການອັສຈັນສາມາດເປັນຄວາມເຊື່ອທາງໂລກ</u>ໄດ້. ມັນງ່າຍຫຼາຍທີ່ຈະດຶງດູດຜູ້ຊົມດ້ວຍຄວາມອັສຈັນ, ງ່າຍກວ່າການອ້ອນວອນໃຫ້ຜູ້ຄົນປະຕິບັດຕາມດ້ວຍ<u>**ຄວາມເຊື່ອທີ່ຄາດຫວັງ**</u>. ບາງຄົນທີ່ໄດ້ສໍາຜັດກັບ

ພຣະທັດອັນມະຫັສຈັນຂອງພຣະເຈົ້າໃນຊີວິດຂອງພວກເພິ່ນ ໄດ້ໃຊ້ເວລາທີ່ຍັງເຫຼືອຢູ່ໃນຊີວິດຂອງພວກເຂົາເຈົ້າແລ່ນຕາມປະສົບການນັ້ນ, ແທນທີ່ຈະແລ່ນຕາມ **ພຣະອົງຜູ້ຊົງເຮັດການມະຫັສຈັນພຣະອົງເອງ**. ໃນຖານະຜູ້ຕິດຕາມພຣະເຢຊູ, ພວກເຮົາຈຳເປັນຕ້ອງຖາມຕົວເອງບາງຄຳຖາມທີ່ສຳຄັນຫຼາຍດັ່ງຕໍ່ລົງໄປນີ້:

- ພວກເຮົາຈະໄວ້ວາງໃຈໃນພຣະອົງ ຫຼືບໍ່, ເຖິງແມ່ນວ່າໃນເວລາທີ່ມັນເບິ່ງຄືວ່າພຣະອົງຊົງມາຊ້າເກີນໄປ?
- ພວກເຮົາຈະຟັງຄົນເຍາະເຍີ້ຍ(mockers) ຫຼາຍກວ່າຟັງ ພຣະອາຈານ(Master) ຫຼືບໍ່?
- ພວກເຮົາຈະຍອມໃຫ້ໃຜເຂົ້າໄປໃນແລວທາງແຫ່ງຄວາມເຈັບປວດແລະຄວາມສິ້ນຫວັງຂອງພວກເຮົາ?

ບໍ່ມີສິ່ງໃດທີ່ຈະຫວານໄປກວ່າການບຸກເບີກ! ພຣະເຢຊູຊົງຟື້ນຟູຄວາມຫວັງຂອງພວກເຮົາ ແລະຊົງນຳພວກເຮົາເຂົ້າໄປໃນແສງສວ່າງຈາກຖ້ຳທີ່ມືດມົວຂອງການຂາດຄວາມເຊື່ອມຕໍ່.

ເປັນທີ່ໜ້າສົນໃຈທີ່ພຣະເຢຊູຊົງສັ່ງໃຫ້ພໍ່ແມ່ໃຫ້ເອົາອາຫານໃຫ້ເດັກນ້ອຍຍິງທີ່ຟື້ນຄືນມາຈາກຕາຍໃຫ້ກິນໂດຍທັນທີທັນໃດ. ສິ່ງສຳຄັນທີ່ສຸດທີ່ພວກເຮົາສາມາດເຮັດສຳລັບບັນດາຜູ້ທີ່ພົບຄວາມເຊື່ອໃນພຣະຄຣິດແມ່ນຕ້ອງລ້ຽງພວກເຂົາເຈົ້າດ້ວຍພຣະຄຳຂອງພຣະອົງໃນທັນທີທັນໃດ. ພວກເຮົາຕ້ອງມີແຜນການທີ່ຈະລ້ຽງບັນດາສາວົກໃໝ່ຂອງອົງພຣະເຢຊູດ້ວຍພຣະຄັມພີ. ໃນເມື່ອພວກເຮົາເຫັນໃຜຜູ້ນຶ່ງເຂົ້າສູ່ຊີວິດໃໝ່ໃນພຣະເຢຊູ, ຄວາມຄິດແລກເລີ່ມສົມຄວນຈະເປັນການໃຫ້ອາຫານຝ່າຍຈິດວິນຍານ. ຫຼືນີ້ອາດຈະເປັນເຣື່ອງລາວຂອງທ່ານເອງ. ທ່ານອາດໄດ້ປະສົບກັບການຟື້ນຄືນຊີວິດທາງຈິດວິນຍານໃນຊີວິດຂອງທ່ານເອງ, ແຕ່ທ່ານຍັງກັບອຶດຢາກຫິວກະຫາຍຢູ່. ຂ່າວດີນັ້ນກໍ່ຄືພຣະເຈົ້າຊົງປ່ຽນແປງພວກເຮົາ ຖ້າຫາກວ່າພວກເຮົາມີຄວາມເຊື່ອທີ່ຄາດຫວັງ.

## ນຳໃຊ້ໃນຊີວິດ

ຄວາມເຊື່ອຮັກສາຄວາມໄວ້ວາງໃຈໃນພຣະເຈົ້າເພື່ອເຮັດສິ່ງທີ່ບໍ່ມີໃຜສາມາດເຮັດໄດ້. ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ອະທິຖານ.** ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງເປີດເຜີຍຜູ້ຄົນໃນຊີວິດຂອງທ່ານຊຶ່ງຕ້ອງການ ການຟື້ນຄືນຊີວິດທາງຈິດວິນຍານ. ຈົ່ງອະທິຖານເພື່ອຄວາມຕື່ນຕົວທາງຈິດວິນຍານ ແລະຄວາມກ້າຫານທີ່ຈະເວົ້າໃນຊີວິດຂອງພວກເຂົາເຈົ້າ.
- **ທ່ອງຈຳ.** ໃນຂນະທີ່ທ່ານຕຶກຕອງເຖິງເຣື່ອງທີ່ໜ້າອັສຈັນໃຈນີ້ ຈົ່ງໃຫ້ຄວາມໝາຍຂອງເຣື່ອງລາວນີ້ ຊຶມຊັບເຂົ້າໃນຄວາມຊົງຈຳໃນພຣະສັນຍາຂອງອົງພຣະເຢຊູ ທີ່ວ່າ: "*ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າ, ແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ.*" (ຢຮ 10:10).
- **ອອກໄປ.** ບາງຄັ້ງໃນອາທິດຕໍ່ໄປ, ຈົ່ງອອກຈາກເຂດຄວາມປອດພັຍຂອງຊີວິດອັນປົກກະຕິຂອງທ່ານແລະໄປຢ້ຽມຢາມຄຸກ, ທີ່ພັກອາສັຍຂອງຄົນໄຮ້ບ້ານ, ຫຼືສະຖານທີ່ພັນທະກິດດ້ານເມດຕາທັມ. ຈົ່ງອາສາສມັກທີ່ຈະຊ່ອຍເຫຼືອ, ແລະອະທິຖານທູນຂໍຕໍ່ພຣະເຈົ້າໃຫ້ຊົງສຳແດງຣິດເດດຂອງພຣະອົງອີກຄັ້ງນຶ່ງໃນຊີວິດຂອງບັນດາຜູ້ຄົນທີ່ທ່ານຜະເຊີນໜ້າ.

ພຣະເຢຊູໄດ້ສະເດັດມາເພື່ອພວກເຮົາສາມາດດຳເນີນຊີວິດດ້ວຍຄວາມກະຕືລືລົ້ນ, ມີຄວາມເຊື່ອທີ່ຄາດຫວັງ. ມັນເປັນຄວາມເຊື່ອແບບນຶ່ງທີ່ເຮັດໃຫ້ພວກເຮົາມີຄວາມຕັ້ງໃຈລໍໃນແຕ່ລະເຊົ້າຖາມພຣະເຈົ້າວ່າ,"ຈະແມ່ນຫຍັງຕໍ່ໄປນີ້?" ຈົ່ງພາກັນມາໃຊ້ຊີວິດແນວນັ້ນເຖີດ!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**